# ບົດຂ່າວ

## ສະຖານທູດ ສປປ ລາວ ທີ່ແບນຊິກ

## ຈັດງານລາຕີການກຸສົນລະດົມທຶນຊ່ວຍເດັກນ້ອຍລາວພິການດ້ວຍໂລກຫົວໃຈ.

************

ວັນທີ 9 ພຶດສະພາ 2011 ຜ່ານມາສະຖານເອກອັກຄະລັດຖະທູດ ສປປ ລາວ ປະຈຳປະເທດແບນຊິກຊຶ່ງທັງຮັບຜິດຊອບປະເທດລຸກຊຳບວກ ໄດ້ຈັດງານລາຕີການກຸສົນຂຶ້ນທີ່ສະໂມສອນລາຊະວັງມຸນສະເຕີ, ນະຄອນຫຼວງລຸກຊຳບວກ ເພື່ອເປັນການລະດົມທຶນຊ່ວຍເຫຼືອໃຫ້ແກ່ເດັກນ້ອຍລາວພິການດ້ວຍໂລກຫົວໃຈ ແລະ ພວມລໍຄອຍການຜ່າຕັດຢູ່ລາວ. ງານລາຕີການກຸນສົນຄັ້ງນີ້ຈັດຂຶ້ນພາຍໃຕ້ການອຸປະຖຳຂອງເຈົ້າຟ້າຍິງມາເຣຍ ເຕເຣຊາ ແຫ່ງລຸກຊຳບວກ ແລະ ດ້ວຍການສະໜັບສະໜູນຂອງທ່ານ ດຣ. ຣິຊາກ ສະໄນເດີ, ກົງສູນກິດຕິມະສັກ ສປປ ລາວ ປະຈຳລຸກຊຳບວກ ແລະ ໄດ້ມີແຂກຂັ້ນສູງ, ນັກທຸລະກິດ, ນັກວິທະຍາສາດ ແລະ ເພື່ອນມິດຊາວລຸກຊຳບວກ ຈຳນວນ 200 ທ່ານເຂົ້າຮ່ວມຕາມການເຊື້ອເຊີນ ແລະ ສາມາດລະດົມທຶນບໍລິຈາກໄດ້ທັງໝົດເປັນເງິນຈຳນວນ 22.000 ເອີໂຣ(ຊາວສອງພັນເອີໂຣ). ງານລາຕີການກຸສົນໄດ້ດຳເນີນໄປແຕ່ຕົ້ນຈົນຈົບດ້ວຍບັນຍາກາດອັນອົບອຸ່ນ, ສະໜິດສະໜົມ ແລະ ສຳເລັດລົງດ້ວຍຜົນສຳເລັດອັນຈົບງາມ, ບັນດາແຂກທີ່ມາຮ່ວມງານໄດ້ຮັບຊົມວີດີໂອກ່ຽວກັບການທ່ອງທ່ຽວ, ການສ້າງສາພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃນໄລຍະ 35 ປີ ຜ່ານມາ, ການວາງສະແດງຮູບພາບ ແລະ ເຄື່ອງຫັດຖະກຳຈາກ ສປປ ລາວພ້ອມດ້ວຍການຊີມອາຫານບໍລິການໂດຍພໍ່ຄົວເອກຊາວເຍຍລະມັນ 4 ທ່ານ ທີ່ອາສາສະໝັກມາຊ່ວຍເຫຼືອງານລາຕີການກຸສົນດ້ວຍຄວາມສະໝັກໃຈ ແລະ ດ້ວຍຄວາມຮັກແພງປະຊາຊົນລາວເຮົາ. ແຂກທີ່ມາຮ່ວມງານຕ່າງກໍໃຫ້ການຍ້ອງຍໍຊົມເຊີຍຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານລາວໃນການດຳເນີນນະໂຍບາຍການພັດທະນາ, ການຮ່ວມມື ແລະ ການເປີດກ້ວາງປະເທດທີ່ຖືກຕ້ອງ, ປະເທດຊາດໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ.

ຜ່ານການໄດ້ເຂົ້າຮ່ວມງານລາຕີສະໂມສອນການກຸສົນຄັ້ງນີ້ດ້ວຍມີຄວາມປະທັບໃຈໃນຄວາມສວຍງາມແຫ່ງທຳມະຊາດເມືອງລາວ ແລະ ນ້ຳໃຈຂອງຊາວລາວນັ້ນ ໄດ້ມີເພື່ອນມິດຊາວລຸກຊຳບວກຈຳນວນ 50 ທ່ານ ໄດ້ຕົກລົງຈັດຕັ້ງການເດີນທາງມາທ່ອງທ່ຽວຢ້ຽມຢາມ ສປປ ລາວ ໃນເດືອນມີນາ 2012 ຈະມາເຖິງອັນເປັນຂີດໝາຍສຳຄັນອັນໜຶ່ງຂອງງານຄັ້ງນີ້.

ໃນໂອກາດດັ່ງກ່າວນີ້, ທ່ານ ສຸທໍາ ສາກົນນິຍົມ, ເອກອັກຄະລັດຖະທູດ ສປປ ລາວ ກໍໄດ້ຂຶ້ນມອບເງິນບໍລິຈາກໃຫ້ແກ່ອົງການຊ່ວຍເຫຼືອເພື່ອພັດທະນາສຸກຂະພາບຂອງເຈົ້າຟ້າຍິງ ເພື່ອນໍາໄປຊ່ວຍເຫຼືອເດັກນ້ອຍລາວຕາມຈຸດປະສົງ ແລະ ມອບໃບຍ້ອງຍໍແກ່ພໍ່ຄົວທັງ 4 ທ່ານ ໃນການທີ່ໄດ້ປະກອບສ່ວນດ້ານບໍລິການອາຫານ ແລະ ກ່າວສະແດງຄວາມຂອບໃຈຮູ້ບຸນຄຸນຕໍ່ບັນດາແຂກ ແລະ ເພື່ອນມິດຊາວລຸກຊໍາບວກຊຶ່ງໄດ້ໃຫ້ການສະໜັບສະໜູນປະກອບສ່ວນຊ່ວຍເຫຼືອເດັກນ້ອຍພິການຫົວໃຈຢູ່ລາວ ກໍຄືປະຊາຊົນລາວໂດຍລວມໃນຄັ້ງນີ້.

ສະຖານເອກອັກຄະລັດຖະທູດ ແຫ່ງ ສ.ປ.ປ.ລາວ
ບຣູກແຊນ